ນະຄອນຫຼວງວຽງຈັນ
ພະແນກ ແຜນການ ແລະ ການລົງທຶນ
ຫ້ອງການບໍລິການ ການລົງທຶນປະຕູດຽວ
ເລກທີ(NO) 911
ວັນທີ(Date) 6/11/2024

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ກົມສົ່ງເສີມການລົງທຶນ

ຫ້ອງການບໍລິການ ການລົງທຶນປະຕູດຽວ

ເລກທີ 609/ຫລປ.ລທ4

ນະຄອນຫຼວງວຽງຈັນ, ວັນທີ 06.11.2024

**ຮຽນ:- ທ່ານ ຫົວໜ້າຫ້ອງການ, ກະຊວງ ພະລັງງານ ແລະ ບໍ່ແຮ່;**

**- ທ່ານ ຫົວໜ້າຫ້ອງການ, ກະຊວງ ການເງິນ;**

**- ທ່ານ ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ.**

**ເລື່ອງ: ຂໍການປະກອບຄໍາເຫັນ ກ່ຽວກັບ ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ ສະເໜີ ຂໍໂອນຮຸ້ນ ໂຄງການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.**

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມສົ່ງເສີມການລົງທຶນ, ສະບັບເລກທີ 0979/ກຜທ, ລົງວັນທີ 25 ມິຖຸນາ 2021;
- ອີງຕາມ ສັນຍາວ່າດ້ວຍ ການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ທີ່ເຊັນສັນຍາກັນລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ ສະບັບລົງວັນທີ 28 ທັນວາ 2009 ແລະ ສັນຍາດັດແກ້ ສະບັບລົງວັນທີ 23 ເມສາ 2011;
- ອີງຕາມ ໃບອະນຸຍາດລົງທຶນ ສະບັບເລກທີ 014-2021/ກຜທ.ລທ4, ລົງວັນທີ 31 ມີນາ 2021;
- ອີງຕາມ ໜັງສືສະເໜີ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ, ສະບັບເລກທີ 01/ຊນ, ລົງວັນທີ 23 ຕຸລາ 2024.

ກົມສົ່ງເສີມການລົງທຶນ ໃນນາມ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂໍຖືເປັນກຽດຮຽນມາຍັງ ທ່ານ ຊາບວ່າ: ໃນວັນທີ 28 ທັນວາ 2009 ລັດຖະບານ ແຫ່ງ ສປປ ລາວ ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ໄດ້ເຊັນສັນຍາວ່າດ້ວຍ ການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ກັບ ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ, ມີອາຍຸສັນຍາ 30 ປີ (ອາຍຸຮອດວັນທີ 27 ທັນວາ 2039). ພາຍໃຕ້ສັນຍາດັ່ງກ່າວ ໄດ້ສ້າງຕັ້ງບໍລິສັດໂຄງການຂຶ້ນຊື່ວ່າ: ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ, ຜູ້ລົງທຶນ: ບໍລິສັດ Sinohydro Corporation Limited, ຖືຮຸ້ນ: 100%, ມີມູນຄ່າການລົງທຶນທັງໝົດ: 94,690,000 ໂດລາສະຫະລັດ ແລະ ທຶນຈົດທະບຽນ: 28,407,000 ໂດລາສະຫະລັດ. ຜ່ານມາ ລັດຖະບານ ໄດ້ດັດແກ້ສັນຍາໃຫ້ບໍລິສັດ 01 ຄັ້ງ ໂດຍການປ່ຽນແປງຜູ້ຖືຮຸ້ນມາເປັນ ບໍລິສັດ Sinohydro Corporation Limited, ຖືຮຸ້ນ: 70%, ບໍລິສັດ Zhejiang Xinhu Group Co., Ltd, ຖືຮຸ້ນ: 30%.

ໃນວັນທີ 24 ຕຸລາ 2024 ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈໍາກັດ ໄດ້ຍື່ນໜັງສືສະເໜີ ສະບັບເລກທີ 01/ຊນ, ລົງວັນທີ 23 ຕຸລາ 2024 ມາຍັງ ກົມສົ່ງເສີມການລົງທຶນ ເພື່ອສະເໜີຂໍໂອນຮຸ້ນ ໂຄງການຂຸດຄົ້ນ ແລະ ປຸງແຕ່ງ ເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ຊຶ່ງມີລາຍລະອຽດດັ່ງນີ້:

❖ **ການປ່ຽນແປງຜູ້ລົງທຶນ:**

➢ **ຈາກເດີມ:**

- ບໍລິສັດ Sinohydro Corporation Limited, ຖືຮຸ້ນ: 70%;

- ບໍລິສັດ Zhejiang Xinhu Group Co., Ltd, ຖືຮຸ້ນ: 30%.

➢ **ມາເປັນ:**

- ບໍລິສັດ Sunward Hongkong Co., Limited, ຖືຮຸ້ນ: 100%.

(ລາຍລະອຽດໄດ້ມີໜັງສືສະເໜີ ແລະ ສັນຍາຊື້-ຂາຍຮຸ້ນ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ກົມສົ່ງເສີມການລົງທຶນ ຈຶ່ງສະເໜີມາຍັງທ່ານເພື່ອຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນທາງດ້ານວິຊາການ ຕາມພາລະບົດບາດ ແລ້ວສົ່ງຄຳເຫັນຂອງທ່ານ ມາຍັງ ກົມສົ່ງເສີມການລົງທຶນ ພາຍໃນ 15 ວັນລັດຖະການ. ສຳລັບຄຳເຫັນຂອງທ່ານ ແມ່ນໃຫ້ຜ່ານການນຳ (ທ່ານ ລັດຖະມົນຕີ ຫຼື ຮອງລັດຖະມົນຕີ, ເຈົ້າຄອງ ຫຼື ຮອງເຈົ້າຄອງນະຄອນຫຼວງວຽງຈັນ) ດ້ວຍ.

**ຫົວໜ້າກົມ**

**ຫົວໜ້າຫ້ອງການບໍລິການ ການລົງທຶນປະຕູດຽວ**

ປອ. ວັນທະນາ ນໍລິນທາ

**ຕິດຕໍ່ພົວພັນ:** ທ. ສຸລິຍາ, ເບີໂທ: 020 9999 5558.

ກະຊວງແຜນການແລະການລົງທຶນ
ກົມສົ່ງເສີມການລົງທຶນ
ເລກທີ: 1 - 6954
ສະບັບ ລົງວັນທີ: 24.10.24

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ

ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ເບີໂທ: 020 5522 5560

ນະຄອນຫຼວງ ວຽງຈັນ, ວັນທີ 23/10/2024.

ເລກທີ 01/ຊນ

ຮຽນ: ທ່ານ ຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ, ທີ່ນັບຖືຢ່າງສູງ

ເລື່ອງ: ຂໍສະເໜີໂອນຮຸ້ນ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ.

- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມສັນຍາວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງເກືອກາລີ (ໂປຕາສ) ຢູ່ເຂດບ້ານທ່າງອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ທີ່ເຊັນສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ ສະບັບລົງວັນທີ 28 ທັນວາ 2009 ແລະ ສັນຍາ ດັດແກ້ ສະບັບລົງວັນທີ 23 ເມສາ 2011;
- ອີງຕາມໃບອະນຸຍາດລົງທຶນ (ສະບັບປ່ຽນແທນ) ສະບັບເລກທີ 014-20214/ກຜທ.ລທ4, ລົງວັນທີ 31 ມີນາ 2021

ຂ້າພະເຈົ້າ Mr CAO YUESHENG, ສັນຊາດ ຈີນ, ໃນນາມ ຜູ້ອຳນວຍການ ຂອງບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ, ຂໍຖືເປັນກຽດຮຽນມາຍັງ ທ່ານ ຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ ເພື່ອຂໍສະເໜີໂອນຮຸ້ນຂອງບໍລິສັດ Sinohydro Corporation Limited, ຖືຮຸ້ນ 70% ແລະ ບໍລິສັດ Zhejiang Xinhu Group Co., Ltd, ຖືຮຸ້ນ 30% ມາເປັນ ບໍລິສັດ Sunward Hongkong CO., Limited 100%.

ເຊິ່ງເຫດຜົນຂອງການໂອນຮຸ້ນ ແມ່ນເນື່ອງຈາກວ່າ ບໍລິສັດ ມີແຜນການປັບປຸງລະບົບການປຸງແຕ່ງ ແຮ່ເກືອໂປຕາສ ໃຫ້ໄດ້ມາດຕະຖານ ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປໄດ້, ເຊິ່ງ ບໍລິສັດ Sunward Hongkong CO., Limited ແມ່ນມີປະສິບການ ແລະ ລະບົບການຈັດການທີ່ດີກວ່າ.

ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຕົກລົງ ເຫັນດີ ແລະ ມີຄວາມເປັນເອກະພາບ ຕາມສັນຍາ ພາຍໃນ ຂອງບໍລິສັດ ສະບັບເລກທີ 10 ກັນຍາ 2024.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງ ທ່ານ ເພື່ອຄົ້ນຄ້ວາ ແລະ ພິຈາລະນາຕາມລະບຽບການດ້ວຍ.

ດ້ວຍຄວາມນັບຖື,

ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ

ບໍລິສັດ ຊີໂນໄຮໂດຣ ມາຍນິ້ງ (ລາວ) ຈຳກັດ SINOHYDRO MINING (LAO) CO.,LTD

CAO YUESHENG